ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

ເລກທີ 417 /ຖວທ

ນະຄອນຫຼວງວຽງຈັນ, ວັນທີ 30 ເມສາ 2024

# ຂໍ້ຕົກລົງ

## ວ່າດ້ວຍການແຕ່ງຕັ້ງຄະນະ ຄຸ້ມຄອງເວັບໄຊ ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງນາຍົກລັດຖະມົນຕີ ສະບັບເລກທີ 678/ນຍ, ລົງວັນທີ 21 ທັນວາ 2021;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການອະນຸມັດເປີດນຳໃຊ້ ເວັບໄຊ ກະຊວງ ຖວທ ສະບັບເລກທີ 39/ຖວທ, ລົງວັນທີ 26 ມັງກອນ 2022.

**ລັດຖະມົນຕີ ຕົກລົງ:**

**ມາດຕາ 1** ເຫັນດີແຕ່ງຕັ້ງຄະນະຄຸ້ມຄອງເວັບໄຊ ຂອງກະຊວງ ຖວທ ດັ່ງມີລາຍຊື່ດັ່ງລຸ່ມນີ້:

**I. ຄະນະນຳພາ-ຊີ້ນຳ ຄຸ້ມຄອງເວັບໄຊ ກະຊວງ ປະກອບມີ:**

1. ທ່ານ ບົວໄລ ພານຸວົງ ຫົວໜ້າຫ້ອງການ ເປັນຫົວໜ້າ;
2. ທ່ານ ລັດອຸດອນ ສຸລິນທອງ ຮອງຫົວໜ້າຫ້ອງການ ເປັນຮອງຫົວໜ້າ;
3. ທ່ານ ວັນນະສິນ ສົມມະວົງ ຮອງຫົວໜ້າກົມສື່ມວນຊົນ ເປັນຄະນະ.

➢ **ຄວາມຮັບຜິດຊອບຂອງຄະນະນຳພາ-ຊີ້ນຳ**

- ຊີ້ນຳໃນການຄຸ້ມຄອງເວັບໄຊ ໃຫ້ນຳໃຊ້ເປັນປົກະຕິ;
- ຕົກລົງບັນຫາຕ່າງໆທາງດ້ານວິຊາການ, ນຳແຜນວຽກທີ່ກ່ຽວຂ້ອງໃຫ້ລັດຖະມົນຕີ ອະນຸມັດ;
- ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍຂອງລັດຖະມົນຕີ.

**II. ກອງເລຂາຊ່ວຍວຽກ ເວັບໄຊ ກະຊວງ ປະກອບມີ:**

1. ທ່ານ ລັດອຸດອນ ສຸລິນທອງ ຮອງຫົວໜ້າຫ້ອງການ ເປັນຫົວໜ້າ;
2. ທ່ານ ສີພາ ຈັນທະວົງ ຫົວໜ້າພະແນກ ຫ້ອງການ ເປັນຮອງຫົວໜ້າ;
3. ທ່ານ ນ. ວຽງມະນີ ພູນສະຫວັດ ຫົວໜ້າພະແນກ, ກົມຈັດຕັ້ງ ແລະ ພະນັກງານ ເປັນຄະນະ;
4. ທ່ານ ລິດທິສັກ ວໍລະລາດ ຫົວໜ້າພະແນກ, ກົມສິລະປະ-ວັດທະນະທຳ ເປັນຄະນະ;
5. ທ່ານ ໜູສິນ ຊ້າງໄຊ ຮອງຫົວໜ້າພະແນກ, ກົມຈັດຕັ້ງ ແລະ ພະນັກງານ ເປັນຄະນະ;
6. ທ່ານ ທິດສະຫວັດ ມະໂນທຳ ຮອງຫົວໜ້າພະແນກ, ກົມແຜນການ ແລະ ການຮ່ວມມືສາກົນ ເປັນຄະນະ;
7. ທ່ານ ນ. ສີລິວັນລາ ພົມມະຈັນ ຮອງຫົວໜ້າພະແນກ, ກົມໂຄສະນາການທ່ອງທ່ຽວ ເປັນຄະນະ;

8. ທ່ານ ນ. ມະນີລາ ຄຳພູມີ ຮອງຫົວໜ້າພະແນກ, ກົມມໍຣະດົກ ເປັນຄະນະ;

9. ທ່ານ ສອນເພັດ ຈັນທະວົງ ຮອງຫົວໜ້າພະແນກ, ກົມສິລະປະ-ວັດທະນະທຳ ເປັນຄະນະ;

10. ທ່ານ ສີສົມພອນ ສະຣິດທິລາດ ຮອງຫົວໜ້າພະແນກ, ກົມຄຸ້ມຄອງທຸລະກິດການທ່ອງທ່ຽວ ເປັນຄະນະ;

11. ທ່ານ ສີສະຫ້ອນຢ່າ ທວາໄກ ວິຊາການ, ຫ້ອງການ ເປັນຄະນະ;

12. ທ່ານ ນາງ ຈັນດາລີ ມີແກ່ນຊະນະ ວິຊາການ, ຫ້ອງການ ເປັນຄະນະ;

13. ທ່ານ ປາດຖະໜາ ສົມສະນິດ ວິຊາການ, ຫ້ອງການ ເປັນຄະນະ;

14. ທ່ານ ຄຳຫຼ້າ ພັນສະຫວັດ ວິຊາການ, ຫ້ອງການ ເປັນຄະນະ;

15. ທ່ານ ນາງ ກິ່ງທະວັນ ແກ້ວບຸນມາ ວິຊາການ, ກົມຄຸ້ມຄອງທຸລະກິດການທ່ອງທ່ຽວ ເປັນຄະນະ;

16. ທ່ານ ເພັດສະຫວັນ ຫຼວງລາດ ວິຊາການ, ກົມແຜນການ ແລະ ການຮ່ວມມືສາກົນ ເປັນຄະນະ;

17. ທ່ານ ແຊມ ແກ້ວດວງຕາ ວິຊາການ, ກົມມໍຣະດົກ ເປັນຄະນະ;

18. ທ່ານ ສົມລິດ ສີຫຼວງໂຄດ ວິຊາການກົມໂຄສະນາການທ່ອງທ່ຽວ ເປັນຄະນະ.

➢ **ຄວາມຮັບຜິດຊອບຂອງກອງເລຂາຊ່ວຍວຽກ**

- ແບ່ງຄວາມຮັບຜິດຊອບພາຍໃນຄະນະ ແລະ ນຳພາເຮັດວຽກຕາມຫຼັກການ;
- ກະກຽມຂຶ້ນແຜນສ້າງ ແລະ ພັດທະນາປັບປຸງເວັບໄຊ ເພື່ອໃຫ້ນຳໃຊ້ໄດ້ເປັນປົກະຕິ ຮັບປະກັນຄວາມປອດໄພທາງດ້ານຂໍ້ມູນ;
- ສ້າງແຜນເຄື່ອນໄຫວຈັດຝຶກອົບຮົມ, ບຳລຸງ ແລະ ຍົກລະດັບຖອດຖອນບົດຮຽນຢູ່ພາຍໃນ ແລະ ຕ່າງປະເທດ ລວມທັງແຜນງົບປະມານເພື່ອຮັບໃຊ້ວຽກງານເວັບໄຊ;
- ນຳເອົາເອກະສານທາງລັດຖະການທີ່ຖືກຕ້ອງ ແລະ ຜ່ານການຮັບຮອງ ລົງໃນເວັບໄຊ ໃຫ້ທັນກັບສະພາບການ ແລະ ສາມາດເຜີຍແຜ່ໄດ້ ພ້ອມທັງເກັບຮັກສາຕົ້ນສະບັບ;
- ຕິດຕາມກວດກາ, ຊຸກຍູ້ທວງເອົາບົດລາຍງານ ສະຖິຕິ, ນິຕິກຳຂໍ້ມູນ-ຂ່າວສານ, ເອກະສານທາງລັດຖະການ ລົງໃນເວັບໄຊ ຈາກຜູ້ປະສານງານ;
- ກວດກາຄວາມຖືກຕ້ອງດ້ານຂໍ້ມູນ-ຂ່າວສານ ແລະ ເອກະສານທາງລັດຖະການ ກ່ອນຈະເອົາລົງໃນເວັບໄຊ;
- ບຳລຸງຮັກສາຂໍ້ມູນ-ຂ່າວສານ ແລະ ເອກະສານທາງລັດຖະການ ເພື່ອຮັບປະກັນຄວາມປອດໄພ ໃຫ້ຢູ່ໃນສະພາບທີ່ສາມາດໃຊ້ໄດ້;
- ສ້າງຕາໜ່າງປະສານວຽກງານເວັບໄຊ;
- ສະຫຼຸບ ແລະ ລາຍງານຜົນການຈັດຕັ້ງປະຕິບັດວຽກງານເວັບໄຊ ໃຫ້ຄະນະນຳກະຊວງ ເປັນແຕ່ລະໄລຍະ;
- ປະຕິບັດສິດ ແລະ ໜ້າທີ່ອື່ນໆໃນຂອບເຂດກົດໝາຍ ແລະ ລະບຽບການກຳນົດໄວ້.

**ມາດຕາ 2** ງົບປະມານຮັບໃຊ້ໃນການເຄື່ອນໄຫວວຽກງານເວັບໄຊ ແມ່ນນຳໃຊ້ງົບປະມານຂອງກະຊວງ ຖວທ.

**ມາດຕາ 3** ຫ້ອງການ, ກົມຈັດຕັ້ງ ແລະ ພະນັກງານ, ບັນດາກົມ ທີ່ກ່ຽວຂ້ອງ ແລະ ບັນດາທ່ານທີ່ຖືກແຕ່ງຕັ້ງໃນຄະນະ ຈົ່ງຮັບຊາບ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງ ສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 4** ຂໍ້ຕົກລົງ ສະບັບນີ້ ປ່ຽນແທນຂໍ້ຕົກລົງ ສະບັບເລກທີ 40/ຖວທ, ລົງວັນທີ 26 ມັງກອນ 2022.

**ມາດຕາ 5** ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີ**

ສວນສະຫວັນ ວິຍະເກດ